ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 08 ຫາ 22 ກັນຍາ 2023



## ຂໍ້ກຳນົດ ເງື່ອນໄຂ ດ້ານສຸຂານາໄມພືດ ສຳລັບການສົ່ງອອກພືດ (ສາລີແຂງ, ໃບຢາສູບ ແລະ ໝາກນອດ) ຈາກ ສປປ ລາວ ໄປ ສປ ຈີນ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້

# ຂໍ້ກຳນົດເງື່ອນໄຂ ດ້ານສຸຂານາໄມພືດ ສຳລັບການສົ່ງອອກ ພືດ (ສາລີແຂງ, ໃບຢາສູບ, ໝາກນອດ) ຈາກ ສປປ ລາວ ໄປ ສປ ຈີນ

**1. ຂໍ້ກຳນົດ ແລະ ເງື່ອນໄຂ ການສົ່ງອອກ ສາລີແຂງ maize.**

1). ຜູ້ສົ່ງອອກຕ້ອງຜ່ານການຂຶ້ນທະບຽນສະຖານທີ່ປະກອບການຜະລິດ ຈາກກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້.

2). ສາລີແຂງສົ່ງອອກເປັນສາລີທີ່ສີເອົາແຕ່ເມັດ ຫຼື ແກ່ນ ຜ່ານການຕາກແຫ້ງ ຫຼື ອົບແຫ້ງ.

3). ຖ້າເປັນແນວພັນ GMO ຕ້ອງມີໃບອະນຸຍາດຮັບຮອງຄວາມປອດໄພ ແລະ ເອກະສານອື່ນທີ່ກ່ຽວຂ້ອງ.

4). ຕ້ອງບໍ່ຕິດໂໝກ, ບໍ່ປົນເປື້ອນ ຈາກດິນ ແລະ ແກ່ນຫຍ້າ ຫຼື ເມັດພືດຊະນິດອື່ນ ແລະ ບໍ່ຕິດແປດສັດຕູພືດກັກກັນ ທີ່ ສປ ຈີນ ກຳນົດໄວ້.

5). ຢູ່ສວນປູກ ຕ້ອງມີມາດຕະການເຝົ້າລະວັງສັດຕູພືດກັກກັນ ແລະ ມີການຈັດການສັດຕູພືດແບບປະສົມປະສານ IPM.

6). ໂຮງເຮືອນຫຸ້ມຫໍ່ບັນຈຸ ຕ້ອງມີລານຕາກ ຫຼື ໂຮງອົບທີ່ສະອາດ.

7). ວັດສະດຸຫຸ້ມຫໍ່ບັນຈຸຕ້ອງ ໃໝ່, ສະອາດ, ຕິດສະຫຼາກ ພາສາອັງກິດ/ຈີນ, ລະບຸ: ປະເທດນຳເຂົ້າ, ຊື່ບໍລິສັດສົ່ງອອກ, ຊື່ແນວພັນ, ລະຫັດສວນປູກ, ລະຫັດໂຮງເຮືອນຫຸ້ມຫໍ່ ແລະ ວັນເດືອນປີ ຫຸ້ມຫໍ່ ແລະ ແຍກເກັບຮັກສາໄວ້ສະຖານທີ່ສະເພາະ, ສະອາດ ເພື່ອປ້ອງກັນການຕິດແປດຂອງສັດພືດ ແລະ ການປົນເປື້ອນອື່ນ.

8). ຕ້ອງມີໃບຢັ້ງຢືນສຸຂານາໄມພືດ.

9). ເມື່ອຊຸດສິນຄ້າມາເຖິງດ່ານຂາເຂົ້າ ຂອງ ສປ ຈີນ, ຖ້າເຈົ້າໜ້າທີ່ກັກກັນພືດຂອງ ສປ ຈີນ ກວດພົບສັດຕູພືດກັກກັນ ຫຼື ສິ່ງປົນເປື້ອນອື່ນ ຊຸດສິນຄ້າຈະຖືກສົ່ງກັບ, ທຳລາຍ ຫຼື ນຳໃຊ້ມາດຕະການທີ່ມີປະສິດທິພາບ ແລະ ຄ່າໃຊ້ຈ່າຍແມ່ນຄວາມຮັບຜິດຊອບຂອງຜູ້ປະກອບການ ພ້ອມທັງໂຈະຊົ່ວຄາວ ການນຳເຂົ້າ ສາລີແຂງ ຈາກສວນປູກ ຫຼື ໂຮງເຮືອນ ຫຸ້ມຫໍ່ບັນຈຸນັ້ນ ຈົນກວ່າຈະຊອກຫາສາເຫດ ແລະ ນຳໃຊ້ມາດຕະການ ທີ່ເໝາະສົມເພື່ອປ້ອງກັນບໍ່ໃຫ້ເກີດຂຶ້ນອີກ.





**2. ຂໍ້ກຳນົດ ແລະ ເງື່ອນໄຂ ການສົ່ງອອກ ໃບຢາສູບແຫ້ງ Tobacco**

1). ຜູ້ສົ່ງອອກຕ້ອງຜ່ານການຂຶ້ນທະບຽນສະຖານທີ່ປະກອບການຜະລິດຈາກກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້;

2). ເປັນຢາສູບທີ່ປູກ ແລະ ປຸງແຕ່ງຂັ້ນຕົ້ນ ຢູ່ ສປປ ລາວ ຕ້ອງອົບແຫ້ງ ດ້ວຍເຄື່ອງອົບແຫ້ງ ໂດຍບໍ່ແມ່ນການຕາກແດດ;

3). ຕ້ອງດຳເນີນການຕິດຕາມ ເຝົ້າລະວັງ, ປ້ອງກັນ ແລະ ຄວບຄຸມສັດຕູພືດໃນຊ່ວງໄລຍະການຜະລິດ

4). ຕ້ອງບໍ່ໃຫ້ຕິດແປດສັດຕູພືດກັກກັນທີ່ຝ່າຍຈີນກຳນົດໄວ້, ປາສະຈາກດິນ, ແມງໄມ້ທີ່ມີຊີວິດ ແລະ ປົນເປື້ອກັບວັດຖຸອື່ນ.

5). ສວນປູກ ຕ້ອງມີມາດຕະການເຝົ້າລະວັງສັດຕູພືດກັກກັນ ແລະ ມີການຈັດການສັດຕູພືດແບບປະສົມປະສານ (IPM)

6). ວັດສະດຸຫຸ້ມຫໍ່ບັນຈຸຕ້ອງ ໃໝ່, ສະອາດ, ຕິດສະຫຼາກ ພາສາອັງກິດ, ລະບຸ: ປະເທດນຳເຂົ້າ, ຊື່ບໍລິສັດ, ຊື່ແນວພັນ, ລະຫັດສວນປູກ, ລະຫັດໂຮງເຮືອນຫຸ້ມຫໍ່ ແລະ ວັນເດືອນປີຫຸ້ມຫໍ່ ແລະ ແຍກເກັບຮັກສາໄວ້ໃນສາງເຢັນ, ສະຖານທີ່ສະອາດ ເພື່ອປ້ອງກັນການຕິດແປດຂອງສັດຕູພືດ ແລະ ການປົນເປື້ອນອື່ນ.

7). ໃນຊ່ວງການປຸງແຕ່ງ ແລະ ເກັບຮັກສາ, ຕ້ອງຕິດຕາມກວດກາສັດຕູພືດເລົ້າສາງ ໃນສະຖານທີ່ປະກອບການຜະລິດ ແລະ ນຳໃຊ້ມາດຕະການຕ່າງໆ ເຊັ່ນ: ການຣົມຢາ ຕາມມາດຕະການສາກົນ ເພື່ອຄວບຄຸມສັດຕູພືດ. ຫ້າມເອົາໃບຢາສູບ ທີ່ຜະລິດຈາກເຂດພື້ນທີ່ອື່ນ ພາຍໃນປະເທດ ຫຼື ຕ່າງປະເທດ ປົນໃບຢາສູບ ທີ່ສົ່ງອອກ ໄປ ສປ ຈີນ.

8).ຕ້ອງມີໃບຢັ້ງຢືນສຸຂານາໄມພືດ

9).ເມື່ອຊຸດສິນຄ້າ ມາເຖິງດ່ານຂາເຂົ້າຂອງ ສປ ຈີນ, ຖ້າເຈົ້າໜ້າທີ່ກັກກັນພືດຂອງ ສປ ຈີນ ກວດພົບສັດຕູພືດກັກກັນ ຫຼື ສິ່ງປົນເປື້ອນອື່ນ ຊຸດສິນຄ້າຈະຖືກສົ່ງກັບ, ທຳລາຍ ຫຼື ນຳໃຊ້ມາດຕະການທີ່ມີປະສິດທິພາບ ແລະ ຄ່າໃຊ້ຈ່າຍແມ່ນຄວາມຮັບຜິດຊອບຂອງຜູ້ປະກອບການພ້ອມທັງໂຈະຊົ່ວຄາວ ການນຳເຂົ້າ ໃບຢາສູບ ຈາກສວນປູກ ຫຼື ໂຮງເຮືອນຫຸ້ມຫໍ່ບັນຈຸນັ້ນ ຈົນກວ່າຈະຊອກຫາສາເຫດ ແລະ ນຳໃຊ້ມາດຕະການ ທີ່ເໝາະສົມເພື່ອປ້ອງກັນບໍ່ໃຫ້ເກີດຂຶ້ນອີກ.

10) ຖ້າກວດພົບໂລຫະໜັກ ຫຼື ສານພິດຕົກຄ້າງຢາປາບສັດຕູພືດເກີນຄ່າມາດຕະຖານ ທີ່ກຳນົດ ຊຸດສິນຄ້າດັ່ງກ່າວຈະຖືກສົ່ງກັບ ແລະ ທຳລາຍຖິ້ມພ້ອມທັງ ແຈ້ງໃຫ້ຝ່າຍລາວຮັບຊາບທັນທີ ເຊັ່ນດຽວກັນກັບກວດພົບສັດຕູພືດ.





**3. ຂໍ້ກຳນົດ ແລະ ເງື່ອນໄຂ ການສົ່ງອອກ ໝາກນອດ Passion friut**

1). ຜູ້ສົ່ງອອກຕ້ອງຜ່ານການຂຶ້ນທະບຽນສະຖານທີ່ປະກອບການຜະລິດ ຈາກກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້.2). ເປັນໝາກນອດສົດ.

3). ຕ້ອງບໍ່ໃຫ້ຕິດແປດສັດຕູພືດກັກກັນ ທີ່ຝ່າຍຈີນກຳນົດໄວ້, ບໍ່ປົນເປື້ອນສິ່ງທີ່ມີຊີວິດ, ດິນ, ສິ່ງເສດເຫຼືອຂອງພືດ ແລະ ສານທີ່ເປັນອັນຕະລາຍ ເຊັ່ນ: ຢາປາບສັດຕູພືດ, ໂລຫະໜັກ, ຈຸລິນຊີ ແລະ ສານພິດຕົກຄ້າງອື່ນ ຕ້ອງບໍ່ເກີນລະດັບການຕົກຄ້າງສູງສຸດ

4). ສວນປູກ ຕ້ອງມີມາດຕະການເຝົ້າລະວັງສັດຕູພືດກັກກັນ ແລະ ມີການຈັດການສວນປະສົມປະສານ, ຕ້ອງປະຕິບັດຕາມເງື່ອນໄຂ ມາດຕະຖານກະສິກຳທີ່ດີ GAP ແລະ ມີການຈັດການສັດຕູພືດແບບປະສົມປະສານ IPM

5). ການຫຸ້ມຫໍ່ບັນຈຸ ຕ້ອງຄັດເລືອກເອົາໝາກທີ່ສົມບູນ ປາສະຈາກ ໝາກເໜົ່າ, ພະຍາດ, ແມງໄມ້, ໃບ ແລະ ຊິ້ນສ່ວນເສດເຫຼືອອື່ນ ແລະ ລ້າງໃຫ້ສະອາດ ພ້ອມທັງກຳຈັດເຊື້ອພະຍາດ ດ້ວຍການນຳໃຊ້ຢາຂ້າເຊື້ອຣາຫຼັງການເກັບກ່ຽວ.

6). ວັດສະດຸຫຸ້ມຫໍ່ບັນຈຸຕ້ອງໃໝ່, ສະອາດ, ຕິດສະຫຼາກພາສາອັງກິດ, ລະບຸ: ປະເທດນຳເຂົ້າ, ຊື່ບໍລິສັດສົ່ງອອກ, ຊື່ແນວພັນ, ລະຫັດສວນປູກ,ລະຫັດໂຮງເຮືອນຫຸ້ມຫໍ່ ແລະ ວັນເດືອນປີຫຸ້ມຫໍ່ ແລະ ແຍກເກັບຮັກສາໄວ້ໃນສາງເຢັນ, ສະຖານທີ່ສະອາດ ເພື່ອປ້ອງກັນການຕິດແປດຂອງສັດຕູພືດ ແລະ ການປົນເປື້ອນອື່ນ.

7). ຖ້ານຳໃຊ້ວັດສະດຸຫຸ້ມຫໍ່ດ້ວຍໄມ້ ແມ່ນຕ້ອງເຮັດການບຳບັດດ້ວຍຄວາມຮ້ອນ ຫຼື ຮົມຢາ ຕາມມະຖານທີ່ກຳນົດໄວ້

8). ຕ້ອງມີໃບຢັ້ງຢືນສຸຂານາໄມພືດ

9). ເມື່ອຊຸດສິນຄ້າມາເຖິງດ່ານຂາເຂົ້າ ຂອງ ສປ ຈີນ,ຖ້າເຈົ້າໜ້າທີ່ກັກກັນພືດຂອງ ສປ ຈີນ ກວດພົບສັດຕູພືດ ຫຼື ສິ່ງປົນເປື້ອນອື່ນ ຊຸດສິນຄ້າຈະຖືກສົ່ງກັບ, ທຳລາຍ ຫຼື ນຳໃຊ້ມາດຕະການທີ່ມີປະສິດທະພາບ ແລະ ຄ່າໃຊ້ຈ່າຍແມ່ນຄວາມຮັບຜິດຊອບຂອງຜູ້ປະກອບການພ້ອມທັງໂຈະຊົ່ວຄາວ ການນຳເຂົ້າ ໝາກນອດສົດ ຈາກສວນປູກ ຫຼື ໂຮງເຮືອນຫຸ້ມຫໍ່ບັນຈຸນັ້ນ ຈົນກວ່າຈະຊອກຫາສາເຫດ ແລະ ນຳໃຊ້ມາດຕະການ ທີ່ເໝາະສົມເພື່ອປ້ອງກັນບໍ່ໃຫ້ເກີດຂຶ້ນອີກ.

10). ຖ້າກວດພົບການນຳໃຊ້ສານເຄມີ ຫຼື ສານພິດຕົກຄ້າງຢາປາບສັດຕູພືດເກີນຕະຖານ ທີ່ກຳນົດ ຊຸດສິນຄ້າດັ່ງກ່າວຈະຖືກສົ່ງກັບ ແລະ ທຳລາຍຖິ້ມ ພ້ອມທັງ ແຈ້ງໃຫ້ຝ່າຍລາວຮັບຊາບທັນທີ.




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;